ທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຫຼວງພະບາງມອບເຄື່ອງຊ່ວຍເຫຼືອ ບັນເທົາທຸກໃຫ້ແກ້ຄອບຄົວຜູ້ຖືກໄພພິບັດນໍ້າຖ້ວມ ທີ່ເມືອງນານ ແຂວງຫຼວງພະບາງ.



ເພື່ອເປັນການຊ່ວຍເຫຼືອ ແລະ ບັນເທົາທຸກໄພພິບັດນໍ້າຖ້ວມ ໃຫ້ແກ່ພໍ່ແມ່ປະຊາຊົນຜູ້ຖືກເຄາະຮ້າຍຈາກຜົນກະທົບໄພທຳມະຊາດ ນໍ້ານານໄຫຼຖ້ວມຢູ່ ບັນດາກຸ່ມບ້ານ ເຂດເມືອງນານ ແຂວງຫຼວງພະບາງ ຜູ້ທີ່ຖືກຜົນກະທົບຈາກໄພທຳມະຊາດໃນຄັ້ງວັນທີ 30 ກໍລະກົດ 2019 ທີ່ຜ່ານມາ.
ເຊິ່ງໃຫ້ກຽດໃນການມອບເຄື່ອງຊວ່ຍເຫຼືອໃນຄັ້ງນີ້ນຳໂດຍ ທ່ານ ຄຳຊ່ຽນ ມິ່ງບຸບຜາ ວ່າການຫົວໜ້າທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຫຼວງພະບາງ ພ້ອມດ້ວຍຄະນະ ການຊ່ວຍເຫຼືອໃນຄັ້ງນີ້ປະກອບມີ: ເຄື່ອງອຸປະໂພກ ບໍລິໂພກ, ເຄື່ອງນຸ່ງຮົ່ມ ແລະ ເງິນສົດຈຳນວນໜຶ່ງ ເຊິ່ງແມ່ນປັດໃຈລວມທີ່ໄດ້ປະກອບສ່ວນຂອງອ້າຍນ້ອງພະນັກງານທະນາຄານທຸລະກິດ ສະຖາບັນການເງິນຈຸລະພາກທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງ ທຫລ ແຂວງຫຼວງພະບາງ ລວມເປັນ ມູນຄ່າທັງໝົດ 16.993.000 ກີບ ໃນນັ້ນເປັນເງິນສົດ ມູນຄ່າ 10.110.000 ກີບ ສ່ວນທີ່ເຫຼືອແມ່ນເຄື່ອງອຸປະໂພກບໍລິໂພກປະເພດຕ່າງໆ.




ໂອກາດດຽວກັນນີ້ທາງຄະນະຈາກ ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຫຼວງພະບາງ ກໍ່ໄດ້ຮັບຟັງການລາຍງານຈາກອຳນາດການປົກຄອງທ້ອງຖິ່ນໃຫ້ຮູ້ວ່າ: ໃນວັນທີ 30 ກໍລະກົດ 2019 ທີ່ຜ່ານມານີ້ໄດ້ເກີດມີຝົນຕົກໜັກໃນຂົງເຂດແຕ່ລະເມືອງທົ່ວ ແຂວງຫຼວງພະບາງ ໂດຍສະເພາະເມືອງທີ່ຖືກຜົນກະທົບໜັກແມ່ນ ເມືອງນານ ສາເຫດເນື່ອງມາຈາກຝົນທີ່ຕົກໜັກເປັນເວລາຫຼາຍຊົ່ວໂມງ ເຮັດໃຫ້ມີນ້ຳປ່າຈຳນວນມະຫາສານໄຫຼເຂົ້າສູ່ ບ້ານເຮືອນ ຂອງປະຊາຊົນ ຖະໜົນຫົນທາງ, ໂຮງຮຽນ, ໄຮ່ນາຕາກ້າ ຮົ້ວສວນບ່ອນທຳການຜະລິດ, ສັດລ້ຽງ ແລະ ອື່ນໆເສຍຫາຍເປັນຈຳນວນຫຼວງຫຼາຍ.

ໃນນາມຕາງໜ້າຄະນະນຳຂອງທະນາຄານ ແລະ ສະຖາບັນການເງິນພາຍໃນແຂວງຫຼວງພະບາງ ທ່ານ ຄຳຊ່ຽນ ມີ່ງບຸບຜາ ວ່າການຫົວໜ້າ ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຫຼວງພະບາງ ໄດ້ກ່າວມີຄຳເຫັນເຊິ່ງທ່ານໄດ້ສະແດງຄວາມເສຍໃຈຕໍ່ກັບເຫດການທີ່ເກີດຂຶ້ນໃນຄັ້ງນີ້, ພ້ອມທັງ




ໃຫ້ກຳລັງໃຈ ແລະ ຝາກຄວາມຢ້ຽມຢາມຖາມຂ່າວມາຍັງການນຳເມືອງຢ່າງສຸດຊຶ້ງ ແລະ ຂໍໃຫ້ທຸກພາກສ່ວນມີສ່ວນຮ່ວມໃນການແກ້ໄຂຊ່ວຍເຫຼືອພໍ່ແມ່ປະຊາຊົນໃນຄັ້ງນີ້ຢ່າງສຸດໃຈ.

ຈາກນັ້ນຕາງໜ້າອຳນາດການປົກຄອງທ້ອງຖິ່ນ ກໍ່ໄດ້ກ່າວຄອບໃຈທີ່ຍາມໃດທາງຂັ້ນເທິງກໍ່ຄືທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຫຼວງພະບາງ ຕະຫຼອດຮອດກຸ່ມທະນາຄານທຸລະກິດ ແລະ ສະຖາບັນການເງິນຈຸລະພາກ ພາຍໃນແຂວງ ຍາມໃດກໍ່ມີຄວາມເປັນຮ່ວງເປັນໃຍນຳຊີວິດການເປັນຢູ່ຂອງພໍ່ແມ່ປະຊາຊົນໂດຍສະເພາະຄອບຄົວຜູ້ທີ່ຖືກປະສົບໄພພິບັດທາງທຳມະຊາດນ້ຳຖ້ວມໃນເທື່ອນີ້; ເຖິງວ່າການຊ່ວຍເຫຼືອໃນຄັ້ງນີ້ເປັນຈຳນວນບໍ່ຫຼວງຫຼາຍ ແຕ່ກໍ່ເປັນນ້ຳຈິດນ້ຳໃຈຈາກທາງທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຫຼວງພະບາງ ພ້ອມດ້ວຍຄະນະ ທາງການນຳເມືອງຈະໄດ້ນຳເອົາວັດຖຸປັດໃຈດັ່ງກ່າວນີ້ໄປຊ່ວຍເຫຼືອພໍ່ແມ່ປະຊາຊົນຜູ້ທີ່ຖືກຜົນກະທົບຕົວຈິງ ເພື່ອເປັນການແບ່ງເບົາຄວາມທຸກໂສກຕາມວັດຖຸປະສົງຂອງທີມງານໃນຄັ້ງນີ້ຢ່າງຖືກຕ້ອງ.

ຂ່າວໂດຍ: ສົມສະນິດ ມິດຕະຜົນ